ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 1192 /ທຄຕລ 2022
ນະຄອນຫຼວງວຽງຈັນ, ວັນທີ: 20/06/2022

# ໜັງສືແຈ້ງເຊີນ

**ເຖິງ:** ບໍລິສັດ, ຫ້າງຮ້ານ, ເຈົ້າຂອງວິສາຫະກິດ ຮ້ານຂາຍຄຳ ແລະ ເຄື່ອງປະດັບເຈເວີລີ ພາຍໃນ ນະຄອນຫຼວງວຽງຈັນ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນ ຜະລິດເຂັມຂັດ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ເຂັມຂັດ ໂລໂກ້ ທຄຕລ ລາຍລະອຽດ ມີດັ່ງຕາຕະລາງລຸ່ມນີ້:

| ລຳດັບ | ລາຍລະອຽດ | ຮູບແບບຕົວຢ່າງ ເຂັມຂັດ ທຄຕລ | ຈຳນວນ |
|---|---|---|---|
| 1 | -ເຂັມຂັດທີ່ເຮັດດ້ວຍທອງເຫຼືອງ ຍ້ອມນ້ຳຄຳ 18 K, ຈຳນວນ 2.160 ອັນ (ນ້ຳໜັກ ປະມານ 9,40 g ຂຶ້ນໄປ/ອັນ).<br>**ດ້ານໜ້າ**<br>-ສະຫຼັກລາຍ ໂລໂກ້ ທຄຕລ (ຕາມຮູບ), ປໍ້າຕົວໜັງສືນູນ.<br>-ຂະໜາດໜ້າກວ້າງ 02*02 ຊມ ແລະ ດ້ານຂ້າງໜາ 02 ມມ.<br>**ດ້ານຫຼັງ**<br>-ດ້ານຫຼັງເປັນໝຸດ(ເຂັມ) ສາມາດປັກເສື້ອໄດ້ ພ້ອມຝາປິດ. |  | 2.160 ອັນ |

- **ເງື່ອນໄຂຂອງບໍລິສັດ, ຫ້າງຮ້ານ, ເຈົ້າຂອງວິສາຫະກິດ ຮ້ານຂາຍຄຳ ແລະ ເຄື່ອງປະດັບເຈເວີລີ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

➢ **ເອກະສານ (ປິດຊອງ)**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດດ້ານເຄື່ອງປະດັບ (ຖ້າມີ), ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021.
2. ສະເໜີລາຄາເປັນເງິນກີບ+ ອາກອນ 07% (ລາຄາເຂັມຂັດທອງເຫຼືອງ ຍ້ອມນ້ຳຄຳ 18 K + ຄ່າລາຍ ) ພ້ອມທັງ ລາຍລະອຽດການຮັບປະກັນສິນຄ້າ ແລະ ໄລຍະການຈັດສົ່ງສິນຄ້າ ລວມທັງ ໄລຍະການສັ່ງຊື້.

3. ກໍານົດຍື່ນຊອງລາຄາ ກ່ອນເວລາ 15.00 ໂມງ ຂອງ ວັນພະຫັດ ທີ 23 ມິຖຸນາ 2022 ໂດຍສາມາດຍື່ນໄດ້ 02 ຊ່ອງທາງ ຄື: ① ສົ່ງມາທີ່ ຊັ້ນ 04 ຕຶກ C ທຄຕລ ສໍານັກງານໃຫຍ່ ຫລື ② ສົ່ງເຂົ້າມາອີເມວ bidcommittee@bcel.com.la

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕາມການກໍານົດຂ້າງເທິງ.

❖ **ເງື່ອນໄຂຂອງໜັງສືສັ່ງຊື້ ລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການຜະລິດເຂັມຂັດ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະຕ້ອງກໍານົດລາຄາເຂັມຂັດເປັນລາຄາເດີມ (ບໍ່ມີການປັບລາຄາ) ໃນໄລຍະ 03 ອາທິດ ຫຼື ຈົນກວ່າ ທຄຕລ ຈະຊໍາລະ ນັບຕັ້ງແຕ່ ມື້ສົ່ງໃບສະເໜີລາຄາ ເປັນຕົ້ນໄປ.
- ຜູ້ສະໜອງທີ່ຊະນະການປະມູນ ຕ້ອງອອກໃບຮັບປະກັນສິນຄ້າຂອງຕົນ ໃຫ້ ທຄຕລ.
- ຜູ້ສະໜອງຕ້ອງເລີ່ມລົງມືຜະລິດທັນທີ ພາຍຫຼັງໄດ້ຮັບໜັງສືສັ່ງຊື້.

❖ **ການຊໍາລະແມ່ນຈ່າຍ ງວດດຽວ ຕາມລາຄາທີ່ສະເໜີມາ ຫຼັງຈາກໄດ້ຮັບເຄື່ອງຄົບຖ້ວນ(ຫຼື ຂຶ້ນກັບການຕົກລົງ).**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ມີຄວາມສົນໃຈ ຍື່ນຊອງເຂົ້າຮ່ວມການປະມູນລາຄາໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ຄໍາພຸດ ສິດທິລາດ